**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເລກທີ 16 /ຖວທ

ນະຄອນຫຼວງວຽງຈັນ,ວັນທີ 01 ມັງກອນ 2024

# ຄຳແນະນຳ

## ກ່ຽວກັບການຈັດຕັ້ງປະຕິບັດດຳລັດ

## ວ່າດ້ວຍການແຂ່ງຂັນ ແລະ ຍ້ອງຍໍ ເຂົ້າສູ່ວຽກງານ ຖວທ

- ອີງຕາມດຳລັດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ສະບັບເລກທີ **678**/ນຍ, ລົງວັນທີ 21 ທັນວາ 2021;
- ອີງຕາມ ດຳລັດວ່າດ້ວຍການແຂ່ງຂັນ ແລະ ຍ້ອງຍໍ ສະບັບເລກທີ **116**/ລບ, ລົງວັນທີ **22** ເມສາ **2019.**
- ອີງຕາມຂໍ້ຕົກລົງວ່າດ້ວຍການແຕ່ງຕັ້ງຄະນະຊີ້ນຳລະດັບຊາດ ກ່ຽວກັບການແຂ່ງຂັນ-ຍ້ອງຍໍ ຮັກຊາດ ແລະ ພັດທະນາ ສະບັບເລກທີ **25**/ຄຊຂຍ, ລົງວັນທີ **08** ກັນຍາ **2022.**

### ລັດຖະມົນຕີ

### ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ອອກຄຳແນະນຳ:

### ໝວດທີ 1

### ບົດບັນຍັດທົ່ວໄປ

**ມາດຕາ 1. ຈຸດປະສົງ**

ຄຳແນະນຳສະບັບນີ້ ກຳນົດຫຼັກການ, ລະບຽບການ, ມາດຕະຖານ, ເປົ້າໝາຍ, ການເກັບກ່ຽວຜົນງານຂອງບັນດາກົມກອງລວມໝູ່, ບຸກຄົນ, ນິຕິບຸກຄົນ, ທັງພາຍໃນ ແລະ ຕ່າງປະເທດ ໃນການນຳສະເໜີຂໍອະນຸມັດຍ້ອງຍໍ, ການຍ້ອງຍໍປະຈຳປີ, ເພື່ອເປັນການປຸກລະດົມທາງດ້ານຈິດໃຈ, ສັນລະເສີນຄຸນງາມຄວາມດີ, ຈົດຈຳບຸນຄຸນ ແລະ ເປັນບ່ອນອີງໃຫ້ແກ່ການຄັດເລືອກຜົນງານການຈັດຕັ້ງປະຕິບັດວຽກງານ, ອຸທິດເຫື່ອແຮງ, ສະຕິປັນຍາ ແລະ ປະກອບສ່ວນທຶນຮອນ, ວັດຖຸອຸປະກອນ ເຂົ້າໃນການປົກປັກຮັກສາ ແລະ ພັດທະນາວຽກງານຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ;

**ມາດຕາ 2. ການແຂ່ງຂັນ ແລະ ຍ້ອງຍໍ.**

**ການແຂ່ງຂັນ**: ແມ່ນການເຄື່ອນໄຫວທີ່ມີການຈັດຕັ້ງ ຂອງບຸກຄົນ, ນິຕິບຸກຄົນ, ພະນັກງານ-ລັດຖະກອນ, ເສີມຂະຫຍາຍຫົວຄິດປະດິດສ້າງ, ການຈັດຕັ້ງປະຕິບັດໜ້າທີ່ວຽກງານສ້າງຜົນງານດີເດັ່ນ, ການຄົ້ນຄວ້າຜັນຂະຫຍາຍວຽກງານ ແລະ ການພັດທະນາວຽກງານຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ;

**ການຍ້ອງຍໍ**: ແມ່ນການສັນລະເສີນຄຸນງາມຄວາມດີ ແລະ ຈົດຈຳບຸນຄຸນ ຂອງບຸກຄົນ, ນິຕິບຸກຄົນ, ພະນັກງານ-ລັດຖະກອນ, ການຈັດຕັ້ງທັງພາຍໃນ ແລະ ຕ່າງປະເທດ ທີ່ມີຜົນງານດີເດັ່ນໃນການປົກປັກຮັກສາ ແລະ ພັດທະນາວຽກງານຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ;

**ມາດຕາ 3. ເນື້ອໃນການແຂ່ງຂັນ:**

ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ກຳນົດເນື້ອໃນການແຂ່ງຂັນລວມຄື: **" ການນຳພາເຂັ້ມແຂງ, ການຄຸ້ມຄອງສັກສິດ, ຂ່າວສານທັນສະໄໝ, ວັດທະນະທຳສີວິໄລ, ທ່ອງທ່ຽວຍືນຍົງ"**; ບົນພື້ນຖານຈຸດໝາຍລວມຂອງພັກ, ຂອງຊາດ, ບົນຈິດໃຈສູ້ຊົນປະຕິບັດບັນດາຄາດໝາຍທີ່ພັກ-ລັດວາງອອກໃນແຕ່ລະໄລຍະ ໃຫ້ປະກົດຜົນເປັນຈິງ;

ນອກຈາກການກຳນົດເນື້ອໃນການແຂ່ງຂັນລວມແລ້ວ, ໃຫ້ບັນດາກົມ, ກອງ, ສະຖາບັນ, ວິທະຍາໄລ ແລະ ລັດວິສະຫະກິດໂຮງພິມແຫ່ງລັດ ນຳເອົາເນື້ອໃນການແຂ່ງຂັນລວມໄປກຳນົດເປັນເນື້ອໃນການແຂ່ງຂັນສະເພາະຂອງຕົນຕື່ມອີກ ບົນພື້ນຖານການຫັນເປັນອັນລະອຽດ, ຈະແຈ້ງໃຫ້ແທດເໝາະກັບແຕ່ລະ

ຂັ້ນເຂດ ແລະ ແຕ່ລະບໍລິເວນທີ່ຕິນຮັບຜິດຊອບໃຫ້ເປັນຮູບປະທຳຕົວຈິງ ເພື່ອສາມາດຕີລາຄາປະເມີນຜົນໄດ້ເປັນແຕ່ໄລຍະ ປະກອບດ້ວຍເນື້ອໃນຂໍ້ແຂ່ງຂັນດັ່ງລຸ່ມນີ້:

**3.1 ວຽກງານເສນາທິການ:**

ພັດທະນາລະບົບການຄຸ້ມຄອງບໍລິຫານ, ປັບປຸງກົງຈັກການຈັດຕັ້ງໃຫ້ກະທັດຮັດ ແລະ ທັນສະໄໝ, ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງໃນການສ້າງຄວາມເຂັ້ມແຂງໃຫ້ແກ່ບຸກຄະລາກອນ ໃຫ້ໄດ້ທັງປະລິມານ ແລະ ຄຸນນະພາບ; ເປີດກວ້າງການຮ່ວມມືກັບສາກົນ, ສຶກສາຄົ້ນຄວ້າລະດົມແຫຼ່ງທຶນ, ນຳໃຊ້ງົບປະມານໃຫ້ມີປະສິດທິພາບ ແລະ ປະສິດທິຜົນ, ວາງແຜນ ແລະ ຕິດຕາມ, ກວດກາ, ປະເມີນຜົນການຈັດຕັ້ງປະຕິບັດແຜນພັດທະນາວຽກງານ ຖວທ ຢ່າງເປັນລະບົບຕໍ່ເນື່ອງ.

**3.2 ວຽກງານຖະແຫຼງຂ່າວ-ສື່ມວນຊົນ:**

ພັດທະນາສື່ມວນຊົນລາວໃຫ້ກ້າວສູ່ຄຸນນະພາບ, ທັນສະໄໝ, ວ່ອງໄວ-ທັນເຫດການ, ເປັນກະບອກສຽງຂອງພັກ-ລັດ ທັງລວງເລິກ ແລະ ລວງກວ້າງ, ສ້າງຄວາມເຂັ້ມແຂງ ແລະ ຫັນໄປສູ່ກຸ້ມຕົນເອງເທື່ອລະກ້າວ; ພົວພັນເຊື່ອມໂຍງກັບສື່ມວນຊົນສາກົນ, ຮັບປະກັນຄວາມປອດໄພ ແລະ ສະຖຽນລະພາບທາງດ້ານຂໍ້ມູນຂ່າວສານ, ສ້າງບຸກຄະລາກອນ ທີ່ໄດ້ມາດຕະຖານສື່ມວນຊົນລາວ ສົມຄູ່ກັບຍຸກສະໄໝ.

**3.3 ວຽກງານວັດທະນະທຳ:**

ສືບຕໍ່ອະນຸລັກ, ປົກປັກຮັກສາ, ສືບທອດ, ຟື້ນຟູ ແລະ ເສີມຂະຫຍາຍມູນເຊື້ອ, ຄຸນຄ່າມໍລະດົກວັດທະນະທຳອັນດີງາມຂອງຊາດໃຫ້ມີຄວາມຍືນຍົງ, ສີວິໄລ; ພັດທະນາອາລິຍະທຳທາງດ້ານວັດຖຸ ແລະ ຈິດໃຈໃນສັງຄົມ ພ້ອມທັງຮັບເອົາຄຸນຄ່າວັດທະນະທຳທີ່ກ້າວໜ້າຂອງມວນມະນຸດຢ່າງມີການເລືອກເຟັ້ນ ແລະ ສອດຄ່ອງກັບຍຸກສະໄໝ, ສາມາດເຊື່ອມໂຍງກັບສາກົນ, ສະກັດກັ້ນສິ່ງຫຍໍ້ທໍ້ທາງດ້ານວັດທະນະທຳທີ່ເປັນໄພຕໍ່ສັງຄົມ, ປັບປຸງ ແລະ ພັດທະນາຜະລິດຕະພັນວັດທະນະທຳ ໃຫ້ມີຄວາມຫຼາກຫຼາຍ ແລະ ມີຄຸນນະພາບສູງ.

**3.4 ວຽກງານທ່ອງທ່ຽວ:**

ພັດທະນາ, ສົ່ງເສີມ ແລະ ຄຸ້ມຄອງການທ່ອງທ່ຽວທາງດ້ານທຳມະຊາດ, ວັດທະນະທຳ, ປະຫວັດສາດ ແລະ ການທ່ອງທ່ຽວກະສິກຳ ໃຫ້ມີຄຸນນະພາບຕາມທິດສີຂຽວ-ຍືນຍົງ, ເຊື່ອມໂຍງກັບພາກພື້ນ ແລະ ສາກົນ, ກາຍເປັນຂະແໜງເສດຖະກິດນຳໜ້າ ແລະ ປະກອບສ່ວນໃຫ້ປະຊາຊົນຫຼຸດພົ້ນຈາກຄວາມທຸກຍາກ ຕາມນະໂຍບາຍຂອງລັດຖະບານ.

**ມາດຕາ 4. ຮູບການແຂ່ງຂັນ:**

1. **ແຂ່ງຂັນປົກກະຕິ:** ແມ່ນການແຂ່ງຂັນການປະຕິບັດໜ້າທີ່ວຽກງານຕາມພາລະບົດບາດ ຂອງພະນັກງານ-ລັດ ຖະກອນ, ບັນດາກົມ, ກອງ, ສະຖາບັນ, ວິທະຍາໄລ ແລະ ລັດວິສະຫະກິດໂຮງພິມແຫ່ງລັດລັດ ທີ່ຂຶ້ນກັບກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ.
2. **ແຂ່ງຂັນຕາມບັ້ນ:** ແມ່ນການແຂ່ງຂັນ ປະຕິບັດໜ້າທີ່ວຽກງານທີ່ສຳຄັນໃດໜຶ່ງ ທີ່ກຳນົດໄລຍະເວລາລະອຽດ ຫຼື ແຂ່ງຂັນຕາມ ມະຕິ, ຄຳສັ່ງ ຂອງຂັ້ນເທິງ ທີ່ໄດ້ກຳນົດໄວ້.

**ມາດຕາ 5. ຂອບເຂດ ແລະ ຄາດໝາຍການແຂ່ງຂັນ:**

1. **ຂອບເຂດການແຂ່ງຂັນ**: ການແຂ່ງຂັນໃນຂອບເຂດທົ່ວກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ.
2. **ຄາດໝາຍການແຂ່ງຂັນ**:

ໃນໄລຍະຕໍ່ໜ້າ ຕ້ອງໄດ້ຍູ້ແຮງຂະບວນການແຂ່ງຂັນ-ຍ້ອງຍໍ ໂດຍຕິດພັນກັບຂະບວນການແຂ່ງຂັນ " **ຮັກຊາດ ແລະ ພັດທະນາ**"; ປຸກລະດົມພະນັກງານ-ລັດຖະກອນໃນທົ່ວກະຊວງ ເຂົ້າຮ່ວມຢ່າງແຂງແຮງ ແລະ ກວ້າງຂວາງ ເພື່ອແຂ່ງຂັນກັນສ້າງຂະບວນການພັດທະນາວຽກງານ ຖວທ ໃຫ້ເປັນຂະບວນຟົດຟື້ນ, ຕໍ່ເນື່ອງ ທັງຮັບປະກັນໃຫ້ໄດ້ ຕາມ 4 ຄາດໝາຍລວມຄື: **ໃຫ້ໄວ, ໃຫ້ດີ, ໃຫ້ຫຼາຍ ແລະ ໃຫ້ຖືກກົດໝາຍ.**

## ໝວດທີ 2
## ການຍ້ອງຍໍ

**ມາດຕາ 6. ເປົ້າໝາຍການຍ້ອງຍໍ:**

ແມ່ນພະນັກງານ-ລັດຖະກອນ, ບັນດາກົມ, ກອງວິຊາການ, ສະຖາບັນ, ວິທະຍາໄລ ແລະ ລັດວິສະຫະກິດໂຮງພິມແຫ່ງລັດ, ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງພາຍໃນ ແລະ ຕ່າງປະເທດທີ່ມີຜົນງານດີເດັ່ນ ໃນການປະກອບສ່ວນເຂົ້າໃນການປົກປັກຮັກສາ ແລະ ພັດ ທະນາວຽກງານຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ.

**ມາດຕາ 7. ບ່ອນອີງການຍ້ອງຍໍ:**

1) ມະຕິ, ຄຳສັ່ງ, ຂໍ້ຕົກລົງ, ລະບຽບການຕ່າງໆ;
2) ການປະເມີນຜົນການຈັດຕັ້ງປະຕິບັດວຽກງານປະຈຳປີ ຂອງພະນັກງານ-ລັດຖະກອນ;
3) ການປະເມີນຂໍ້ແຂ່ງຂັນຂອງອີງການຈັດຕັ້ງມະຫາຊົນປະຈຳປີ;
4) ການກວດກາຕີລາຄາ ແລະ ແບ່ງປະເພດສະມາຊິກພັກ, ໜ່ວຍພັກປະຈຳປີ;
5) ຜົນງານຕົວຈິງ ແລະ ຜົນສຳເລັດດີເດັ່ນ;
6) ສະພາບຈຸດພິເສດດ້ານທີ່ຕັ້ງ, ເງື່ອນໄຂ, ກາລະໂອກາດ ແລະ ສະພາບແວດລ້ອມອື່ນ ຂອງການປະຕິບັດໜ້າທີ່ວຽກງານ ທີ່ໄດ້ຮັບມອບໝາຍ;

**ມາດຕາ 8. ຮູບການຍ້ອງຍໍ:**

ຮູບການຍ້ອງຍໍ ປະກອບມີ **ສອງຮູບການ** ດັ່ງນີ້:

1. **ຍ້ອງຍໍປົກກະຕິ**: ແມ່ນການຍ້ອງຍໍຕໍ່ພະນັກງານ-ລັດຖະກອນ, ບັນດາກົມ, ທຽບເທົ່າກົມ, ສະຖາບັນ, ກອງວິຊາການ, ວິທະຍາໄລ ແລະ ລັດວິສະຫະກິດໂຮງພິມແຫ່ງລັດ ຕາມພາລະບົດບາດ ຂອງຂະບວນການແຂ່ງຂັນໃນການປະຕິບັດໜ້າທີ່ວຽກງານ ປະຈຳປີ;

❖ **ພະນັກງານ-ລັດຖະກອນ** ຫາກໄດ້ຮັບການຍ້ອງຍໍປະເພດ **I** ຕະຫຼອດໄລຍະ **5** ປີ ຈຶ່ງນຳສະເໜີການຍ້ອງຍໍ ຂັ້ນລັດຖະບານ ຕາມລຳດັບ.

❖ **ສຳລັບການຈັດຕັ້ງ:**
ການຍ້ອງຍໍປົກກະຕິໃຫ້ກົມກອງລວມໝູ່ ໃຫ້ດຳເນີນເປັນປົກກະຕິປະຈຳປີ ເມື່ອຮອດ **10** ປີ ຈຶ່ງນຳສະເໜີຂໍການຍ້ອງຍໍລັດຖະບານ.

❖ **ລົງທະບຽນແຂ່ງຂັນ ແລະ ຍ້ອງຍໍ** ຕາມພາລະບົດບາດ, ຕາມການກຳນົດຕຳແໜ່ງງານ ໃນການປະຕິບັດໜ້າທີ່ວຽກງານ ຂອງພະນັກງານ-ລັດຖະກອນ, ບັນດາກົມ, ທຽບເທົ່າກົມ, ສະຖາບັນ, ກອງວິຊາການ,ວິທະຍາໄລ ແລະ ລັດວິສະຫະກິດໂຮງພິມແຫ່ງລັດ ປະຈຳປີ;

❖ **ສຳລັບການຍ້ອງຍໍ ໃນໂອກາດວັນສ້າງຕັ້ງ** ຂອງບັນດາກົມ, ທຽບເທົ່າກົມ, ສະຖາບັນ, ກອງວິຊາການ, ວິທະຍາໄລ ແລະ ລັດວິສະຫະກິດໂຮງພິມແຫ່ງລັດ, ແມ່ນໃຫ້ສະເໜີເປັນປີຖ້ວນ **10** ປີ; **20** ປີ; **30** ປີ ຂຶ້ນໄປ; ໃນກໍລະນີການສະເຫຼີມສະຫຼອງວັນສ້າງຕັ້ງ ຂອງບັນດາກົມ, ທຽບເທົ່າກົມ, ສະຖາບັນ, ກອງວິຊາການ ແລະ ລັດວິສະຫະກິດໂຮງ ພິມແຫ່ງລັດ ຫາກຖືກກັບການຍ້ອງຍໍຜົນງານ **10** ປີ ແມ່ນໃຫ້ເລືອກເອົາຜົນງານໃດໜຶ່ງ ທີ່ເໝາະສົມ ເພື່ອນຳສະເໜີຍ້ອງຍໍ, ຈະບໍ່ມີການຍ້ອງຍໍຊໍ້າຊ້ອນໃນຜົນງານດຽວກັນສອງເທື່ອ.

2. **ຍ້ອງຍໍຕາມບັ້ນ**; ແມ່ນການຍ້ອງຍໍ ພະນັກງານ-ລັດຖະກອນ, ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທີ່ໄດ້ຮັບການມອບໝາຍໜ້າທີ່ວຽກງານ ໃນບັ້ນໃດບັ້ນໜຶ່ງ ທີ່ມີຜົນງານດີເດັ່ນ ແລະ ມີຜົນສຳເລັດ; ບັນດາບັ້ນ, ໂຄງການ ທີ່ກະຊວງ ຖວທ ໄດ້ມີຄຳແນະນຳ, ແຈ້ງການ, ຄຳສັ່ງ ແລະ ຮັບຮອງເປັນທາງການ ແລະ ຕ້ອງໄດ້ລົງທະບຽນການແຂ່ງຂັນ-ຍ້ອງຍໍ ຈຶ່ງສາມາດນຳສະເໜີການຍ້ອງຍໍ ຕາມລະບຽບການ.

## ໝວດທີ 3
## ປະເພດ ແລະ ມາດຕະຖານການຍ້ອງຍໍ

**ມາດຕາ 9: ປະເພດການຍ້ອງຍໍ:**

❖ ສຳລັບພະນັກງານ-ລັດຖະກອນ ປະກອບມີ:

1. ໃບຍ້ອງຍໍ ປະເພດ **I;**
2. ໃບຍ້ອງຍໍປະເພດ **II.**

❖ ສຳລັບບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງທັງພາຍໃນ ແລະ ຕ່າງປະເທດ ປະກອບມີ:

1. ໃບຍ້ອງຍໍ;
2. ໃບຊົມເຊີຍ.

**ມາດຕາ 10. ມາດຕະຖານການຍ້ອງຍໍ:**

❖ **ສຳລັບບຸກຄົນ.**

- ຕ້ອງແມ່ນພະນັກງານ-ລັດຖະກອນ ທີ່ສັງກັດຢູ່ບັນດາກົມ, ທຽບເທົ່າກົມ, ສະຖາບັນ, ກອງວິຊາການ, ວິທະຍາໄລ ແລະ ລັດວິສະຫະກິດໂຮງພິມແຫ່ງລັດ ຂອງກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ, ບຸກຄົນ, ນິຕິບຸກຄົນ ທີ່ໄດ້ໃຫ້ການອຸປະຖຳຊ່ວຍເຫຼືອ ເຂົ້າໃນການປົກປັກຮັກສາ ແລະ ພັດທະນາວຽກງານຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ;
- ມີຜົນງານດີເດັ່ນ, ມີແບບແຜນວິທີເຮັດວຽກ, ມີຫົວຄິດປະດິດສ້າງໃໝ່, ມີຄວາມສາມັກຄີ, ມີຄວາມຫ້າວຫັນ, ມີຄວາມເປັນແບບຢ່າງນຳໜ້າໃນຂະບວນການຕ່າງໆ, ມີການເຄື່ອນໄຫວຢ່າງຕັ້ງໜ້າ ແລະ ດີເດັ່ນຕະຫຼອດໄລຍະການປະຕິບັດໜ້າທີ່ວຽກງານ, ມີຄວາມຮັບຜິດຊອບສູງ ແລະ ມີຜົນສຳເລັດຕາມລະດັບຄາດໝາຍ ຫຼື ລື່ນຄາດໝາຍທີ່ວາງໄວ້;
- ໄດ້ຮັບການປະເມີນຜົນການຈັດຕັ້ງປະຕິບັດວຽກງານປະຈຳປີ ໃນລະດັບ **ດີ ຫາ ດີຫຼາຍ,** ໄດ້ຮັບການຢັ້ງຢືນຂໍ້ແຂ່ງຂັນ ຊາວໜຸ່ມ **4** ບຸກ, ກຳມະບານ **5** ເປັນເຈົ້າ, ຂໍ້ແຂ່ງຂັນແມ່ຍິງ **3** ດີ ແລະ ສຳລັບສະມາຊິກພັກ ຕ້ອງໄດ້ຮັບຮອງເປັນສະມາຊິກພັກປະເພດ ແຂງ ປະຈຳປີ ໃນການພັດທະນາວຽກງານ ຖວທ.
- **ພະນັກງານ-ລັດຖະກອນ** ໄດ້ຮັບການປະເມີນຜົນການຈັດຕັ້ງປະຕິບັດວຽກງານປະຈຳປີ ໃນລະດັບ **ດີ ຫຼື ດີຫຼາຍ** ໄດ້ຮັບການຢັ້ງຢືນຂໍ້ແຂ່ງຂັນ ຊາວໜຸ່ມ **4** ບຸກ, ກຳມະບານ **5** ເປັນເຈົ້າ, ຂໍ້ແຂ່ງຂັນແມ່ຍິງ **3** ດີ ແລະ ໄດ້ຮັບຮອງເປັນສະມາຊິກພັກປະເພດ **ແຂງ** ປະຈຳປີ ຈະໄດ້ຮັບການຍ້ອງຍໍ ປະເພດ **I;**
- **ພະນັກງານ-ລັດຖະກອນ** ໄດ້ຮັບການປະເມີນຜົນການຈັດຕັ້ງປະຕິບັດວຽກງານປະຈຳປີ ໃນລະດັບ **ກາງ** ໄດ້ຮັບການຢັ້ງຢືນຂໍ້ແຂ່ງຂັນ ຊາວໜຸ່ມ **4** ບຸກ, ກຳມະບານ **5** ເປັນເຈົ້າ, ຂໍ້ແຂ່ງຂັນແມ່ຍິງ **3** ດີ ແລະ ໄດ້ຮັບຮອງເປັນສະມາຊິກພັກປະເພດ **ກາງ** ປະຈຳປີ ຈະໄດ້ຮັບການຍ້ອງຍໍ ປະເພດ **II.**
- **ພະນັກງານ-ລັດຖະກອນ** ຫາກໄດ້ຮັບການຍ້ອງຍໍປະເພດ **I** ຕະຫຼອດໄລຍະ **5** ປີ ຈຶ່ງນຳສະເໜີການຍ້ອງຍໍຂັ້ນລັດຖະບານ ຕາມລຳດັບ;
- **ພະນັກງານ-ລັດຖະກອນ** ຫາກຖືກລົງວິໄນປະເພດຕ່າງໆ ແມ່ນຈະບໍ່ໄດ້ຮັບການພິຈາລະນາການຍ້ອງຍໍປະຈຳປີ.

❖ **ສຳລັບກົມກອງລວມໝູ່.**

- ມີຜົນງານພົ້ນເດັ່ນໃນຂະບວນການຈັດຕັ້ງເຊື່ອມຊຶມ, ຜັນຂະຫຍາຍ ແລະ ປະຕິບັດມະຕິ, ຄຳສັ່ງ ແລະ ນະໂຍບາຍຂອງພັກ-ລັດ, ຂອງກະຊວງໄດ້ດີ ສາມາດປຸກລະດົມໄດ້ບຸກຄົນ ແລະ ກົມກອງລວມໝູ່ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;
- ເປັນກົມກອງທີ່ມີຄວາມສາມັກຄີພາຍໃນ-ພາຍນອກ, ມີການນຳພາ-ຄຸ້ມຄອງເປັນຢ່າງດີ, ຮັບປະກັນໄດ້ຄວາມເປັນລະບຽບຮຽບຮ້ອຍ ແລະ ມີຄວາມສະຫງົບ, ເຄົາລົບລະບຽບກົດໝາຍ, ມີການເຄື່ອນໄຫວດີເດັ່ນໃນການນຳພາ-ຊີ້ນຳ ເປັນທີ່ຍອມຮັບຂອງສັງຄົມ;
- ໄດ້ຮັບການຈັດປະເພດ ເປັນໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ປະເພດ **ແຂງ** ປະຈຳປີ, ໜ່ວຍຊາວໜຸ່ມ **4** ບຸກ, ໜ່ວຍສະຫະພັນກຳມະບານ **5** ເປັນເຈົ້າ ແລະ ໜ່ວຍສະຫະພັນແມ່ຍິງ **3** ດີ **ຈະ**ໄດ້ຮັບການຍ້ອງຍໍປະເພດ **I;** ຖ້າຂາດມາດຕະຖານໃດ ມາດຕະຖານໜຶ່ງ ຈະໄດ້ຮັບການຍ້ອງຍໍປະເພດ **II;**

- **ກົມ, ກອງ ໃດ** ຫາກມີພະນັກງານ-ລັດຖະກອນ ທີ່ຂຶ້ນກັບການຄຸ້ມຄອງຂອງຕົນຖືກປະຕິບັດວິໄນປະເພດຕ່າງໆ ຈະບໍ່ໄດ້ຮັບການພິຈາລະນາຍ້ອງຍໍໃດໆ.
- ນິຕິບຸກຄົນ, ອົງການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ໄດ້ໃຫ້ການອຸປະຖຳຊ່ວຍເຫຼືອ ເຂົ້າໃນການປົກປັກຮັກສາ ແລະ ພັດທະນາວຽກງານ ຖວທ.

❖ **ມູນຄ່າການຊ່ວຍເຫຼືອລ້າ ສຳລັບບຸກຄົນ ຫຼື ການຈັດຕັ້ງພາຍໃນ ແລະ ຕ່າງປະເທດ.**

❖ **ບຸກຄົນ ແລະ ການຈັດຕັ້ງພາຍໃນປະເທດ.**

| ປະເພດໃບຍ້ອງຍໍ | ມູນຄ່າການຊ່ວຍເຫຼືອລ້າ (ສະກຸນເງິນກີບ) | |
|---|---|---|
| | ບຸກຄົນ | ການຈັດຕັ້ງ |
| ໃບຊົມເຊີຍ<br>ໃບຍ້ອງຍໍ | **1,000,000 - 5,000,000**<br>**5,100,000 - 10,000,0000** ຂຶ້ນໄປ | **5,000,000 - 10,000,000**<br>**10,100,000** ຂຶ້ນໄປ |

❖ **ບຸກຄົນ ແລະ ການຈັດຕັ້ງຕ່າງປະເທດ.**

| ປະເພດໃບຍ້ອງຍໍ | ມູນຄ່າການຊ່ວຍເຫຼືອລ້າ (ສະກຸນເງິນກີບ) | |
|---|---|---|
| | ບຸກຄົນ | ການຈັດຕັ້ງ |
| ໃບຊົມເຊີຍ<br>ໃບຍ້ອງຍໍ | **5,000,000 - 10,000,000**<br>**10,100,000** ຂຶ້ນໄປ | **10,000,000 - 20,000,000**<br>**20,100,000** ຂຶ້ນໄປ |

## ໝວດທີ 4
## ຄວາມຮັບຜິດຊອບ ການແຂ່ງຂັນ-ຍ້ອງຍໍ

### ມາດຕາ 11. ຄວາມຮັບຜິດຊອບ ການແຂ່ງຂັນ-ຍ້ອງຍໍ

❖ **ກົມຈັດຕັ້ງ ແລະ ພະນັກງານ ມີໜ້າທີ່:**

1. ຄົ້ນຄວ້າ, ເຊື່ອມຊຶມ, ເຜີຍແຜ່, ມະຕິ, ຄຳສັ່ງ, ບົດແນະນຳ ກ່ຽວກັບວຽກງານແຂ່ງຂັນ ແລະ ຍ້ອງຍໍ ຮັກຊາດ ແລະ ພັດທະນາໃນແຕ່ລະໄລຍະ;
2. ຄົ້ນຄວ້າ ແລະ ນຳສະເໜີການຈັດພິທີເປີດຂະບວນການແຂ່ງຂັນ-ຍ້ອງຍໍ, ແຜນການແຂ່ງຂັນ, ເນື້ອໃນການແຂ່ງຂັນ ໃຫ້ຂັ້ນເທິງພິຈາລະນາ;
3. ຄົ້ນຄວ້າ ແລະ ນຳສະເໜີຂັ້ນເທິງພິຈາລະນາຮັບຮອງຕົວເລກການຍ້ອງຍໍຜົນງານປະຈຳປີ, ປະຈຳ 5 ປີ ຂອງບຸກຄົນ ແລະ ການຈັດຕັ້ງ ທີ່ມີຜົນງານດີເດັ່ນ ໃນຂະບວນການແຂ່ງຂັນ-ຍ້ອງຍໍຮັກຊາດ ແລະ ພັດທະນາ;
4. ຄົ້ນຄວ້າ ແລະ ນຳສະເໜີບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງທັງພາຍໃນ ແລະ ຕ່າງປະເທດ ທີ່ໄດ້ປະກອບສ່ວນທາງດ້ານວັດຖຸ, ທຶນຮອນ, ເຫື່ອແຮງສະຕິປັນຍາ ເຂົ້າໃນການປົກປັກຮັກສາ ແລະ ພັດທະນາວຽກງານຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ;
5. ກວດກາບັນດາເອກະສານ ທີ່ພົວພັນເຖິງວຽກງານແຂ່ງຂັນ-ຍ້ອງຍໍ ໃຫ້ຖືກຕ້ອງ, ຄົບຖ້ວນ ເພື່ອນຳສະເໜີຂັ້ນເທິງພິຈາລະນາ; ພ້ອມກັນນັ້ນກໍ່ຊຸກຍູ້, ຕິດຕາມ, ກວດກາ, ປະເມີນຜົນການແຂ່ງຂັນ, ສະຫຼຸບ, ຕີລາຄາ, ຖອດຖອນບົດຮຽນວຽກງານແຂ່ງຂັນ-ຍ້ອງຍໍ, ຂະບວນການແຂ່ງຂັນ-ຍ້ອງຍໍຮັກຊາດ ແລະ ພັດທະນາ ເປັນປົກກະຕິ ແລະ ຕໍ່ເນື່ອງ;

❖ **ບັນດາກົມ, ທຽບເທົ່າກົມ, ສະຖາບັນ, ກອງວິຊາການ, ວິທະຍາໄລ ແລະ ລັດວິສະຫະກິດໂຮງພິມແຫ່ງລັດ ມີໜ້າທີ່:**

1. ບັນດາກົມ, ທຽບເທົ່າກົມ, ສະຖາບັນ, ກອງວິຊາການ, ວິທະຍາໄລ ແລະ ລັດວິສະຫະກິດໂຮງພິມແຫ່ງລັດ ທີ່ຂຶ້ນກັບກະຊວງ ຖວທ, ມີຄວາມຮັບຜິດຊອບໃນການຈັດຕັ້ງສ້າງຂະບວນການແຂ່ງຂັນ ໂດຍຕິດພັນກັບການອອກແຮງງານ, ການຜະລິດ, ປະຢັດມັດທະຍັດ, ປະດິດສ້າງ, ການຮ່ຳຮຽນ, ການປະຕິບັດວຽກງານວິຊາ

ສະເພາະ ແນໃສ່ຮັບປະກັນໃຫ້ແກ່ການປົກປັກຮັກສາ ແລະ ພັດທະນາວຽກງານຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ;

2. ໂຄສະນາປຸກລະດົມຂົນຂວາຍທຸກອົງການຈັດຕັ້ງ, ທຸກພາກສ່ວນທຸລະກິດ, ຊັ້ນຄົນຕ່າງໆເຂົ້າຮ່ວມຂະບວນການແຂ່ງຂັນ-ຍ້ອງຍໍ, ໂດຍໂຄສະນາເຜີຍແຜ່ວຽກງານແຂ່ງຂັນ-ຍ້ອງຍໍ, ວຽກດີຄົນເດັ່ນ ແລະ ບັນດາຕົວແບບທີ່ກ້າວໜ້າ;
3. ຊຸກຍູ້, ຕິດຕາມ,ກວດກາ, ປະເມີນຜົນການແຂ່ງຂັນ, ເລືອກເຟັ້ນ, ສະຫຼຸບຕີລາຄາ, ຖອດຖອນບົດຮຽນວຽກງານແຂ່ງຂັນ-ຍ້ອງຍໍ, ຂະບວນການແຂ່ງຂັນ-ຍ້ອງຍໍ ຮັກຊາດ ແລະ ພັດທະນາ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ ເປັນປົກກະຕິ ແລະ ຕໍ່ເນື່ອງ;
4. ນຳສະເໜີການຍ້ອງຍໍ ແລະ ຈັດຕັ້ງຍ້ອງຍໍສັນລະເສີນບຸກຄົນ ແລະ ການຈັດຕັ້ງ ທີ່ມີຜົນສຳເລັດດີເດັ່ນໃນການແຂ່ງຂັນອອກແຮງງານ, ການຜະລິດ, ການຄົ້ນຄວ້າ, ປະດິດສ້າງ ແລະ ການປະຕິບັດໜ້າທີ່ວຽກງານ ທີ່ໄດ້ຮັບມອບໝາຍ ຕາມປົກກະຕິ ແລະ ຕາມຂັ້ນຕ່າງໆ;

**ມາດຕາ 12. ການປະກອບເອກະສານ.**

ເອກະສານປະກອບເພື່ອສະເໜີຍ້ອງຍໍ ມີດັ່ງນີ້:

1. ໜັງສືສະເໜີ ຈາກການຈັດຕັ້ງທີ່ກ່ຽວຂ້ອງ;
2. ປະຫວັດຫຍໍ້ຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ;
3. ບົດລາຍງານກ່ຽວກັບຜົນງານ ຂອງບຸກຄົນ ແລະ ການຈັດຕັ້ງ;
4. ໃບລົງທະບຽນຂໍ້ແຂ່ງຂັນຂອງບຸກຄົນ ແລະ ການຈັດຕັ້ງ (ສຳລັບພະນັກງານ-ລັດຖະກອນ);
5. ບົດບັນທຶກ, ການປະເມີນຜົນການຈັດຕັ້ງປະຕິບັດວຽກງານປະຈຳປີ, ການປະເມີນຂໍ້ແຂ່ງຂັນຂອງອົງການຈັດຕັ້ງມະຫາຊົນ, ການປະເມີນກວດກາ, ຕີລາ ແລະ ແບ່ງປະເພດໜ່ວຍພັກ, ສະມາຊິກພັກປະຈຳປີ ແລະ ເອກະສານຢັ້ງຢືນຮັບຮອງ;
6. ສັນຍາການຊ່ວຍເຫຼືອລ້າ, ບົດວິພາກໂຄງການ, ຮູບພາບໂຄງການ ແລະ ຂໍ້ມູນຫຼັກຖານເອກະສານອ້າງອີງອື່ນໆ.

## ໝວດທີ 5
## ບົດບັນຍັດສຸດທ້າຍ

**ມາດຕາ 13. ການຈັດຕັ້ງປະຕິບັດ:**

ໃນເດືອນມັງກອນຂອງປີ ໃຫ້ບັນດາກົມ, ທຽບເທົ່າກົມ, ສະຖາບັນ, ກອງວິຊາການ, ວິທະຍາໄລ ແລະ ລັດວິສາຫະກິດໂຮງພິມແຫ່ງລັດ ເປີດຂະບວນການແຂ່ງຂັນປະຈຳປີ ແລະ ຮອດເດືອນທັນວາຂອງປີ ແມ່ນໃຫ້ສະຫຼຸບຂະບວນການແຂ່ງຂັນ ພ້ອມຄັດເລືອກຕົວເດັ່ນ ເພື່ອສະເໜີການຍ້ອງຍໍຫາຄະນະຊີ້ນຳການແຂ່ງຂັນ-ຍ້ອງຍໍຮັກຊາດ ແລະ ພັດທະນາຂອງກະຊວງ ຖວທ ໂດຍຜ່ານກົມຈັດຕັ້ງ ແລະ ພະນັກງານ;

ໃນເດືອນມັງກອນຂອງທຸກປີ ກະຊວງ ຖວທ ສະຫຼຸບວຽກງານແຂ່ງຂັນ-ຍ້ອງຍໍ ແລະ ເປີດຂະບວນການແຂ່ງຂັນ ປະຈຳປີ.

**ມາດຕາ 14. ຂອບເຂດການນຳໃຊ້:**

ພະນັກງານ-ລັດຖະກອນ, ບັນດາກົມ, ທຽບເທົ່າກົມ, ສະຖາບັນ, ກອງວິຊາການ ແລະ ລັດວິສະຫະກິດໂຮງພິມແຫ່ງລັດ ທີ່ຂຶ້ນກັບກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ, ບຸກຄົນ, ນິຕິບຸກຄົນ, ອົງການຈັດຕັ້ງພາຍໃນ ແລະ ຕ່າງປະເທດ ຈັດຕັ້ງປະຕິບັດຄຳແນະນຳສະບັບນີ້ຢ່າງມີປະສິດທິຜົນ.

**ລັດຖະມົນຕີ**

ສວນສະຫວັນ ວິຍະເກດ